# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ.. ໜ້າ 01-04**

**II. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ................................................... ໜ້າ 05-08**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ ພະຈິກ **2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 09/11/2023, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສົ່ງໂທລະເລກອວຍພອນ ເຖິງຄະນະບໍລິຫານງານສູນກາງພັກປະຊາຊົນກຳປູເຈຍ ເນື່ອງໃນໂອກາດວັນຊາດກຳປູເຈຍ ຄົບຮອບ 70 ປີ (09/11/1953 - 09/11/2023) ຊຶ່ງມີເນື້ອໃນຊົມເຊີຍຕໍ່ໄຊຊະນະອັນສະຫງ່າລາສີ ແລະ ຜົນງານອັນໃຫຍ່ຫຼວງໃນພາລະກິດຕໍ່ສູ້ປົດປ່ອຍຊາດ ກໍຄືການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດຂອງກຳປູເຈຍ ຕະຫຼອດໄລຍະ 70 ປີຜ່ານມາ; ຕີລາຄາສູງຕໍ່ການເລືອກຕັ້ງສະພາແຫ່ງຊາດ ຊຸດທີ VII ທີ່ໄດ້ຮັບຜົນສຳເລັດຢ່າງຈົບງາມ; ສະແດງຄວາມເຊື່ອໝັ້ນວ່າພາຍໃຕ້ການນຳພາຂອງສົມເດັດ ໂນໂຣດົມ ສີຫະໂມນີເຈົ້າຊີວິດກຳປູເຈຍ; ສົມເດັດ ຮຸນ ມາເນດ, ນາຍົກລັດຖະມົນຕີກຳປູເຈຍ ແລະ ລັດຖະບານກຳປູເຈຍ ຈະສືບຕໍ່ຍາດໄດ້ຜົນງານໃໝ່ທີ່ໃຫຍ່ຫຼວງກວ່າເກົ່າໃນການສ້າງສາ ແລະ ພັດທະນາປະເທດ. ໃນໂອກາດດຽວກັນນີ້ ສະຫາຍ ເລ ຮວ່າຍຈຸງ, ເລຂາທິການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ກໍໄດ້ສົ່ງໂທລະເລກ ອວຍພອນ ເຖິງຄູ່ຮ່ວມຕຳແໜ່ງເຊັ່ນດຽວກັນ.

ໃນໂອກາດຢ້ຽມຢາມຍີ່ປຸ່ນຢ່າງເປັນທາງການ ໃນວັນທີ 28/11/2023, ສະຫາຍ ຫວໍ ວັນເຖື້ອງ, ກົມການເມືອງສູນກາງພັກ, ປະທານປະເທດຫວຽດນາມ ໄດ້ພົບປະກັບ ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ, ຮອງປະທານພັກປະຊາທິປະໄຕເສລີ (LDP), ປະທານພັກ Komeito, ປະທານພັກກອມມູນິດຍີ່ປຸ່ນ. ພ້ອມນີ້ ສອງຝ່າຍໄດ້ອອກຖະແຫຼງການຮ່ວມກ່ຽວກັບການຍົກລະດັບການພົວພັນຂອງສອງປະເທດຂຶ້ນເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ. ສ່ວນການຮ່ວມມືດ້ານເສດຖະກິດສອງຝ່າຍເຫັນດີຊຸກຍູ້ການຮັບປະກັນຄວາມໝັ້ນຄົງດ້ານເສດຖະກິດ, ເປີດກວ້າງການຮ່ວມມືໃນບັນດາຂົງເຂດໃໝ່ເຊັ່ນ: ນະວັດຕະກຳ, ການຖ່າຍທອດເຕັກໂນໂລຊີ, ການຫັນເປັນດີຈີຕອນ ແລະ ການຫັນເປັນສີຂຽວ.

### 2) ພັກກອມມູນິດຈີນ

ວັນທີ 14-17/11/2023, ທ່ານ ສີ ຈິ້ນຜິງ, ປະທານປະເທດຈີນ ໄດ້ຢ້ຽມຢາມ ອາເມລິກາ ໃນໂອກາດເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳກຸ່ມ APEC 2023 ທີ່ San Francisco, ລັດ California ແລະ ພົບປະກັບ ທ່ານ Joe Biden, ປະທານາທິບໍດີອາເມລິກາ. ສອງຝ່າຍເຫັນດີຮ່ວມກັນໃນຫຼາຍໆດ້ານ ໂດຍສະເພາະການເພີ່ມທະວີຄວາມເຂົ້າໃຈທາງດ້ານການເມືອງ, ການຮັກສາການປະສານງານກັນເພື່ອຜົນປະໂຫຍດຂອງສອງຝ່າຍ, ເຄົາລົບເຊິ່ງກັນ ແລະ ກັນ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ການແຂ່ງຂັນທີ່ເປັນທຳ, ການສົ່ງເສີມການໄປມາຫາສູ່ລະຫວ່າງປະຊາຊົນສອງຊາດ ແລະ ອື່ນໆ. ພ້ອມນີ້, ຜູ້ນຳທັງສອງໄດ້ປຶກສາຫາລືກັນໃນຫຼາຍບັນຫາ ເຊັ່ນ: ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ, ຂໍ້ຂັດແຍ່ງອູແກຣນ-ລັດເຊຍ, ບັນຫາແຫຼມເກົາຫຼີ, ບັນຫາທະເລຈີນໃຕ້, ບັນຫາໄຕ້ຫວັນ, ການພົວພັນທາງການຄ້າ ແລະ ອື່ນໆ. ການຄ້າລະຫວ່າງຈີນ-ອາເມລິກາ ໃນປີ 2022 ບັນລຸເຖິງ 690,6 ຕື້ໂດລາ (690,6 Billion US) ທຽບໃສ່ປີ 2018 ແມ່ນ 658,8 ຕື້ໂດລາ.

ໃນການເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳອົງການຮ່ວມມືເສດຖະກິດອາຊີ-ປາຊີຟິກ (APEC) ຄັ້ງທີ 30 ທີ່ອາເມລິກາ, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ສະເໜີແຜນການພັດທະນາໃນສາມທົດສະວັດຕໍ່ໜ້າຜ່ານ 04 ຂໍ້ສະເໜີຄື: ຍຶດໝັ້ນການປະດິດສ້າງເປັນແຮງຊຸກຍູ້, ເປີດກວ້າງການພົວພັນສູ່ພາຍນອກ, ພັດທະນາຕາມທິດສີຂຽວ ແລະ ສ້າງຜົນປະໂຫຍດຢ່າງກວມລວມ.

ວັນທີ 21/11/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ເຂົ້າຮ່ວມກອງປະຊຸມສະໄໝພິເສດຂອງບັນດາປະເທດກຸ່ມ BRICS ແບບທາງໄກ ເພື່ອປຶກສາຫາລືແກ້ໄຂຂໍ້ຂັດແຍ່ງໃນເຂດ Gaza. ກອງປະຊຸມໄດ້ເຫັນດີຮ່ວມກັນໃນຫຼາຍບັນຫາໂດຍສະເພາະການຢຸດຍິງ, ການຮັບປະກັນການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ຮຽກຮ້ອງໃຫ້ປະຊາຄົມໂລກຕ້ອງວາງມາດຕະການທີ່ເໝາະສົມເພື່ອປ້ອງກັນການແຜ່ລາມຂອງຄວາມຂັດແຍ່ງ. ທ່ານ ສີ

ຈີ້ນພິງ ກ່າວວ່າ ນັບຕັ້ງແຕ່ເກີດຂໍ້ຂັດແຍ່ງໃນວັນທີ 07/10/2023 ເປັນຕົ້ນມາ ຈີນໄດ້ຊຸກຍູ້ການຢຸດຍິງ, ເຈລະຈາ, ຊ່ວຍເຫຼືອດ້ານມະນຸດສະທຳ ແລະ ສົ່ງເສີມການແກ້ໄຂບັນຫາຢ່າງຮອບດ້ານ, ຍຸຕິທຳ ແລະ ຖາວອນໂດຍໄວ.

ວັນທີ 20/11/2023, ທ່ານ ຫວາງ ອີ້, ຫົວໜ້າຫ້ອງການຄະນະກຳມະການວຽກງານການຕ່າງປະເທດສູນກາງພັກກອມມູນິດຈີນ, ລັດຖະມົນຕີຕ່າງປະເທດຈີນ ໄດ້ຕ້ອນຮັບບັນດາລັດຖະມົນຕີຕ່າງປະເທດອາຣັບ ແລະ ອິດສະລາມ, ຊຶ່ງປະກອບດ້ວຍລັດຖະມົນຕີຕ່າງປະເທດອາຣັບບີ ຊາອຸດິດ, ຊອກດານີ, ເອຢິບ, ອິນໂດເນເຊຍ, ປາແລັດສະຕິນ ແລະ ເລຂາທິການໃຫຍ່ອົງການຮ່ວມມືອິດສະລາມ. ສອງຝ່າຍໄດ້ປຶກສາຫາລືກັນໃນການແກ້ໄຂຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ, ຍຶດໝັ້ນແຜນການຂອງສອງປະເທດ, ເຄົາລົບກົດໝາຍ ວ່າດ້ວຍມະນຸດສະທຳສາກົນ, ຊຸກຍູ້ການເຈລະຈາ ແລະ ຢຸດຍິງໃນເຂດ Gaza.

**3) ພັກແຮງງານເກົາຫຼີ**

ວັນທີ 25/11/2023, ທ່ານ ກິມ ເຈິງອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ລົງກວດກາສູນຄວບຄຸມດາວທຽມສອດແນມ ພາຍຫຼັງ ສປປ ເກົາຫຼີ ໄດ້ປ່ອຍດາວທຽມສອດແນມທາງການທະຫານ Malligyang-1 ຂຶ້ນສູ່ວົງໂຄຈອນ ແລະ ສາມາດຖ່າຍພາບເຮືອຮົບ USS Carl Vinson ແລະ ຖານທັບອາເມລິກາ ປະຈຳ ສ. ເກົາຫຼີ.

**4) ພັກກອມມູນິດກູບາ**

ວັນທີ 19/11/2023, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ, ປະທານປະເທດກູບາ ໄດ້ເຂົ້າຮ່ວມພິທີໂຮມຊຸມນຸມກັບປະຊາຊົນກູບາ ກວ່າ 300 ຄົນທີ່ອາໄສຢູ່ຕ່າງປະເທດ. ທ່ານ Miguel ກ່າວວ່າ ການປະກອບສ່ວນໃນການຊ່ວຍເຫຼືອຂອງອ້າຍນ້ອງຮ່ວມຊາດມີຄວາມສຳຄັນຢ່າງຍິ່ງໃນການສ້າງສາ ແລະ ພັດທະນາປະເທດຊາດ ເຖິງວ່າຈະຖືກປິດລ້ອມ ແລະ ຂວໍ້າບາດກວ່າ 04 ທົດສະວັດ ຈາກອາເມລິກາ ແລະ ຕາເວັນຕົກ, ແຕ່ປະຊາຊົນທີ່ອາໄສຢູ່ຕ່າງປະເທດ ແລະ ປະເທດເພື່ອນມິດຮ່ວມອຸດົມການ ກໍຍັງສືບຕໍ່ສະໜັບສະໜູນ ແລະ ເຊື່ອໝັ້ນວ່າການປະກອບສ່ວນດັ່ງກ່າວ ເປັນກຳລັງແຮງໜຶ່ງທີ່ເຮັດໃຫ້ກູບາກາຍເປັນປະເທດສັງຄົມນິຍົມໂດຍໄວ.

**5) ເວເນຊູເອລາ**

ວັນທີ 04/11/2023, ທ່ານ Nicolás Maduro, ປະທານາທິບໍດີເວເນຊູເອລາ ໄດ້ຕ້ອນຮັບ ທ່ານ Phan Dinh Trac, ປະທານຄະນະກຳມະການພາຍໃນສູນກາງພັກກອມມູນິດຫວຽດນາມ. ສອງຝ່າຍໄດ້ລົງນາມໃນຂໍ້ຕົກລົງຮ່ວມມືຫຼາຍສະບັບ ເຊັ່ນ: ດ້ານການເມືອງ, ເສດຖະກິດ ແລະ ເຕັກໂນໂລຊີ. ໃນການຢ້ຽມຢາມດັ່ງກ່າວ ທ່ານ Phan Dinh Trac ຍັງໄດ້ພົບປະກັບ ທ່ານ Diosdado Cabello, ຮອງປະທານຜູ້ທີໜຶ່ງຂອງພັກສັງຄົມນິຍົມເອກະພາບເວເນຊູເອລາ, ຊຶ່ງຝ່າຍຫວຽດນາມ ໄດ້ຍົກບັນຫາຄວາມບໍ່ເຂົ້າໃຈກັນລະຫວ່າງ ພັກສັງຄົມນິຍົມເອກະພາບເວເນຊູເອລາ ແລະ ພັກກອມມູນິດເວເນຊູເອລາ ຂຶ້ນມາປຶກສາຫາລືເພື່ອຫາທາງອອກຮ່ວມກັນ.

**6) ອາກຊັງຕິນ**

ວັນທີ 19/11/2023, ອາກຊັງຕິນ ຈັດການເລືອກຕັ້ງປະທານາທິບໍດີ ຮອບທີ 02 ລະຫວ່າງ ທ່ານ Sergio Tomás Massa, ລັດຖະມົນຕີກະຊວງເສດຖະກິດ, ຈາກພັກຝ່າຍຊ້າຍ ແລະ ທ່ານ Javier Milei, ຈາກພັກເສລີນິຍົມກ້າວໜ້າ (ພັກຝ່າຍຂວາຈັດ). ຜົນການເລືອກຕັ້ງແມ່ນ ທ່ານ Javier Milei ໄດ້ຄະແນນສຽງສະໜັບສະໜູນ 55.7 % ແລະ ທ່ານ Sergio Tomás Massa ໄດ້ 44.3%. ການເລືອກຕັ້ງຄັ້ງນີ້ມີປະຊາຊົນອອກມາໃຊ້ສິດປ່ອນບັດເລືອກຕັ້ງຫຼາຍກວ່າ 26 ລ້ານຄົນ (76%) ຈາກຜູ້ມີສິດເລືອກຕັ້ງທັງໝົດ. ທ່ານ Javier Milei ຈະເຂົ້າພິທີສາບານເປັນປະທານາທິບໍດີອາກຊັງຕິນ ຄົນທີ 61 ໃນວັນທີ 10/12/2023 ແລະ ດຳລົງຕຳແໜ່ງເຖິງປີ 2027.

**7) ນາຍົກລັດຖະມົນຕີນູແວນເຊລັງ ເຂົ້າພິທີສາບານຕົນ**

ວັນທີ 27/11/2023, ທ່ານ Christopher Luxon, ອາຍຸ 53 ປີ ຈາກພັກອະນຸລັກນິຍົມ, ອະດີດປະທານສາຍການບິນແຫ່ງຊາດນູແວນເຊລັງ ເຂົ້າພິທີສາບານຕົນເຂົ້າຮັບຕຳແໜ່ງນາຍົກລັດຖະມົນຕີ ຄົນທີ 42 ພາຍຫຼັງໄດ້ຮັບໄຊຊະນະໃນການເລືອກຕັ້ງທົ່ວໄປໃນວັນທີ 14/10/2023 ດ້ວຍຄະແນນສຽງສະໜັບສະໜູນ 48 ບ່ອນນັ່ງໃນສະພາ ຈາກທັງໝົດ 123 ບ່ອນນັ່ງ (ເພີ່ມຂຶ້ນ 14 ບ່ອນນັ່ງ ຈາກປີ 2020), ສ່ວນ ທ່ານ Chris Hipkins, ອະດີດນາຍົກລັດຖະມົນຕີ

ຈາກພັກແຮງງານ ໄດ້ 34 ບ່ອນນັ່ງ (ຫຼຸດລົງ 28 ບ່ອນນັ່ງ). ໄຊຊະນະດັ່ງກ່າວຂອງ ທ່ານ Luxon ຈະເຮັດໃຫ້ພັກອະນຸລັກນິຍົມ ສາມາດຈັດຕັ້ງຄະນະລັດຖະບານປະສົມຊຸດໃໝ່, ຊຶ່ງບັນຫາສໍາຄັນໃນການບໍລິຫານປະເທດແມ່ນການແກ້ໄຂບັນຫາເສດຖະກິດ ແລະ ອັດຕາເງິນເຟີ້.

## 2. ສະພາບພາກພື້ນ ແລະ ສາກົນ

### 1. ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ

#### 1) ສະພາບມຽນມາ

ສະພາບພາຍໃນມຽນມາ ຍັງສືບຕໍ່ວຸ້ນວາຍເນື່ອງຈາກກໍາລັງຊົນເຜົ່າສ່ວນນ້ອຍ ເປັນຕົ້ນກອງກໍາລັງພັນທະມິດພາລາດອນພາບ (Brotherhood Alliance) ພາຍໃຕ້ປະຕິບັດການ 1027 ແລະ ກອງກໍາລັງຮ່ວມ (ກອງກໍາລັງຊົນຊາດກະເຣັນນີ, ກອງທັບກາເຣັນນີ ແລະ ແນວໂຮມປົດປ່ອຍປະຊາຊົນແຫ່ງຊາດກາເຣັນນີ) ພາຍໃຕ້ປະຕິບັດການ 11.11 ໄດ້ສືບຕໍ່ໂຈມຕີ ແລະ ຍຶດຖານທີ່ໝັ້ນຂອງກອງທັບມຽນມາ ໂດຍສະເພາະຢູ່ລັດຊານ, ກາເຣັນນີ, ກາເຣັນ, ຄະຊິ່ນ, ຍະໄຂ່, ພາກພື້ນຊາໄກ ແລະ ມັນດາເລ.

ທ່ານ ພົນເອກ ມິນ ອ່ອງລາຍ, ຜູ້ບັນຊາການທະຫານສູງສຸດມຽນມາ ກ່າວວ່າ ຄວາມທ້າທາຍອັນຍິ່ງໃຫຍ່ພາຍຫຼັງການເຂົ້າບໍລິຫານປະເທດໃນວັນທີ 01/02/2021 ເປັນຕົ້ນມາ ແມ່ນບັນຫາຢາເສບຕິດລຽບເຂດຊາຍແດນ, ຊຶ່ງກອງກໍາລັງຊົນເຜົ່າກຸ່ມນ້ອຍ ໃຊ້ງົບປະມານທີ່ໄດ້ຈາກການຄ້າ-ຂາຍ ຢາເສບຕິດມາເປັນທ່າແຮງໃນການຕໍ່ສູ້ຕ້ານກັບກອງທັບມຽນມາ. ໃນວັນທີ 08/11/2023, ທ່ານ ມິນ ອ່ອງລາຍ ໄດ້ຮຽກປະຊຸມສຸກເສີນສະພາປ້ອງກັນປະເທດ ແລະ ຄວາມໝັ້ນຄົງແຫ່ງຊາດ ແລະ ກ່າວຢືນຢັນຈະຕອບໂຕ້ກັບການໂຈມຕີຂອງກໍາລັງຊົນເຜົ່າສ່ວນນ້ອຍ. ຫຼ້າສຸດ ກອງທັບມຽນມາ ໄດ້ຮຽກລະດົມກໍາລັງເສີມ 14.000 ຄົນ ເພື່ອປ້ອງກັນນະຄອນຫຼວງເນປີດໍ, ມີການສ້າງປ້ອມປ້ອງກັນແບບຊົ່ວຄາວ ແລະ ຖາວອນຍົກລະດັບການປ້ອງກັນໃນລະດັບສູງເພື່ອກຽມພ້ອມຮັບມືກັບຄວາມໄປໄດ້ໃນການແຜ່ຂະຫຍາຍຂອງການຕໍ່ສູ້ຂອງກອງກໍາລັງຊົນເຜົ່າສ່ວນນ້ອຍທີ່ອາດເຄື່ອນເຂົ້າມານະຄອນຫຼວງເນປີດໍ.

ໃນວັນທີ 15/11/2023, ກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນຢູ່ກາຕາ ໄດ້ຮຽກຮ້ອງໃຫ້ຢຸດຕິວິກິດການໃນມຽນມາ, ຢຸດຕິທຸກຄວາມຮຸນແຮງ ແລະ ມີຄວາມອົດກັ້ນທີ່ສຸດ.

ວັນທີ 29/11/2023, ຈີນ ໄດ້ອອກຖະແຫຼງກ່ຽວກັບບັນຫາມຽນມາວ່າ ຈີນ ແລະ ມຽນມາ ເປັນປະເທດບ້ານໃກ້ເຮືອນຄຽງທີ່ມີໄມຕີຈິດຮ່ວມກັນ. ຈີນເຄົາລົບອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງມຽນມາ, ເປັນຫ່ວງຕໍ່ສະພາບການໃນມຽນມາ, ຮຽກຮ້ອງໃຫ້ຢຸດຍິງ ແລະ ຈັດການເຈລະຈາ ແລະ ຫວັງວ່າ ສະພາບພາຍໃນມຽນມາຈະມີຄວາມສະຫງົບໂດຍໄວ.

#### 2) ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ

ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ ສືບຕໍ່ເພີ່ມທະວີຄວາມເຄັ່ງຕຶງຢ່າງຕໍ່ເນື່ອງ, ວັນທີ 19/11/2023, ອິດສະຣາແອນ ໄດ້ໃຊ້ໂດຣນໂຈມຕີເມືອງ Nabatieh ທາງພາກໃຕ້ຂອງລີບັງ ແລະ ໂຈມຕີດ້ວຍລູກສອນໄຟໃສ່ຫຼາຍເມືອງທາງພາກຕາເວັນອອກສຽງເໜືອຂອງລີບັງ. ສ່ວນ ກຸ່ມ Hezbollah ໃນລີບັງ ຕອບໂຕ້ດ້ວຍການໃຊ້ລູກສອນໄຟໂຈມຕີສູນບັນຊາການທະຫານຂອງອິດສະຣາແອນ ຕາມເຂດຊາຍແດນລີບັງ-ອິດສະຣາແອນ. ກຸ່ມ Houti ໃນເຢເມນ ທີ່ສະໜັບສະໜູນກຸ່ມ Hamas ຍຶດເຮືອຂົນສິ່ງສິນຄ້າຂອງອິດສະຣາແອນ ຢູ່ ທະເລແດງ. ຮອດປັດຈຸບັນມີຜູ້ເສຍຊີວິດຫຼາຍກວ່າ 13.000 ຄົນ ແລະ ບາດເຈັບ 30.000 ກວ່າຄົນ.

ວັນທີ 20/11/2023, ທ່ານ Ebrahim Raisi, ປະທານາທິບໍດີອີຣານ ສົ່ງຈົດໝາຍເຖິງຜູ້ນໍາ 50 ກວ່າປະເທດໂດຍສະເພາະຈີນ, ລັດເຊຍ, ຕວັກກີ, ອາຟຣິກາໃຕ້ ແລະ ຊອກດານີ ເພື່ອຮຽກຮ້ອງໃຫ້ບັນດາປະເທດດັ່ງກ່າວກົດດັນອິດສະຣາແອນ ໃຫ້ຢຸດຍິງໃນເຂດ Gaza ພ້ອມທັງປະນາມການກະທໍາຂອງອິດສະຣາແອນ ທີ່ລະເມີດສິດທິມະນຸດ ແລະ ກົດໝາຍສາກົນ. ວັນທີ 21/11/2023, ກາຕ້າ ເປັນຄົນກາງໃນການເຈລະຈາເຮັດໃຫ້ກຸ່ມ Hamas ແລະ ອິດສະຣາແອນສາມາດບັນລຸຂໍ້ຕົກລົງຕົກລົງປ່ອຍຕົວປະກັນ ຈໍານວນ 50 ຄົນ ສ່ວນໃຫຍ່ເປັນແມ່ຍິງ ແລະ ເດັກນ້ອຍ ເພື່ອໃຫ້ອິດສະຣາແອນຢຸດຍິງຊົ່ວຄາວເປັນເວລາ 04 ວັນໃນເຂດ Gaza ແລະ ປ່ອຍຊາວປາແລັດສະຕິນ ຈໍານວນ 150 ຄົນ ທີ່ ອິດສະຣາແອນໄດ້ຈັບຕົວໄວ້.

**3) ສະພາບແຫຼມເກົາຫຼີ**

ສະພາບແຫຼມເກົາຫຼີ ສືບຕໍ່ເພີ່ມທະວີຄວາມເຄັ່ງຕຶງພາຍຫຼັງວັນທີ 21/11/2023, ສປປ ເກົາຫຼີ ປະສົບຜົນສຳເລັດໃນການສົ່ງດາວທຽມສອດແນມທາງການທະຫານຂຶ້ນສູ່ວົງໂຄຈອນ, ເຊິ່ງໄດ້ສ້າງຄວາມບໍ່ພໍໃຈໃຫ້ແກ່ ສ. ເກົາຫຼີ. ໃນເວລາຕໍ່ມາ ສ. ເກົາຫຼີ ໄດ້ປະກາດຢຸດຕິຂໍ້ຕົກລົງຮ່ວມມືທາງການທະຫານບາງສ່ວນກັບ ສປປ ເກົາຫຼີ. ຫຼ້າສຸດ ສປປ ເກົາຫຼີ ໄດ້ຕອບໂຕ້ໂດຍການປະກາດຢຸດຕິການຮ່ວມມືຮອບດ້ານທາງການທະຫານກັບ ສ. ເກົາຫຼີ. ສ່ວນ ຈີນ ຮຽກຮ້ອງໃຫ້ທຸກຝ່າຍໃຫ້ຫຼີກລ້ຽງການໃຊ້ມາດຕະການທີ່ກໍ່ໃຫ້ເກີດຄວາມຮຸນແຮງ ແລະ ເພີ່ມທະວີຄວາມເຄັ່ງຕຶງຢູ່ແຫຼມເກົາຫຼີ. ວັນທີ 26/11/2023, ສ. ເກົາຫຼີ ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີຕ່າງປະເທດສາມຝ່າຍຈີນ, ສ. ເກົາຫຼີ ແລະ ຍີ່ປຸ່ນ ຄັ້ງທີ 10. ກອງປະຊຸມເຫັນດີຮ່ວມກັນໃນການສືບຕໍ່ຮັກສາກົນໄກການປະສານງານຜ່ານກອງປະຊຸມສາມຝ່າຍການພົບປະແລກປ່ຽນຂອງຄະນະຜູ້ແທນຂັ້ນສູງ, ຮັກສາສະຖຽນລະພາບ,ຄວາມໝັ້ນຄົງໃນພາກພື້ນ ແລະ ຫຼຸດຜ່ອນຄວາມເຄັ່ງຕຶງຢູ່ແຫຼມເກົາຫຼີ.

**2. <u>ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ</u>**

**1) ສະພາບປີ່ນອ້ອມຂໍ້ຂັດແຍ່ງອູແກຣນ-ລັດເຊຍ**

ການໂຈມຕີກັນລະຫວ່າງ ອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ ຢູ່ ຂົງເຂດ Kherson, Odessa, Zaporazhye, ແລະ Bakhmut. ພັນທະມິດຂອງ ອູແກຣນ ສືບຕໍ່ໃຫ້ການສະໜັບສະໜູນ, ຊຶ່ງໃນວັນທີ 20/11/2023, ທ່ານ Lloyd Austin, ລັດຖະມົນຕີກະຊວງປ້ອງກັນປະເທດຂອງອາເມລິກາ ຢ້ຽມຢາມ ອູແກຣນ ແລະ ປະກາດສະໜັບສະໜູນຄັ້ງໃໝ່ ທີ່ມີມູນຄ່າ 100 ລ້ານໂດລາ ເພື່ອນຳໃຊ້ຕໍ່ສູ້ກັບລັດເຊຍໃນລະດູໜາວນີ້. ຂະນະທີ່, ອາເມລິກາ ແລະ ອັງກິດ ຮຽກຮ້ອງໃຫ້ອູແກຣນຂະຫຍາຍການລະດົມພົນເພີ່ມຕື່ມ ໂດຍການປັບປ່ຽນອາຍຸເກນທະຫານ ທີ່ສາມາດຮຽກຕົວຊາວໜຸ່ມ, ຜູ້ສູງອາຍຸ ແລະ ແມ່ຍິງໄດ້ (ເລີ່ມຕົ້ນຈາກອາຍຸ 17 ປີ ເຖິງ 70 ປີ).

ທ່ານ Mikhail Podoliak, ທີ່ປຶກສາປະທານາທິບໍດີອູແກຣນ ຮຽກຮ້ອງໃຫ້ຕາເວັນຕົກ ສະໜອງງົບປະມານ ແລະ ອາວຸດໃຫ້ອູແກຣນໄວຂຶ້ນກວ່າເກົ່າ ເພາະໄລຍະຜ່ານມາມີຄວາມຊັກຊ້າ ແລະ ບໍ່ເປັນໄປຕາມແຜນການຊ່ວຍເຫຼືອ. ນອກນີ້, ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ ເຮັດໃຫ້ການສະໜັບສະໜູນອູແກຣນ ຂອງພັນທະມິດນັບມື້ນັບຫຼຸດລົງ. ຂະນະທີ່, ອີຢູ ກະກຽມແຜນການຂວ້ຳບາດລັດເຊຍ ຮອບໃໝ່, ຊຶ່ງໄລຍະຜ່ານມາແມ່ນບໍ່ປະສົບຜົນສຳເລັດຕາມຄາດໝາຍ. ແຟງລັງ ປະກາດປິດຊາຍແດນ 04 ຈຸດ (Vaalimaa, Nuijamaa, Imatra ແລະ Niirala) ທີ່ຕິດກັບລັດເຊຍ ນັບແຕ່ວັນທີ 18/11/2023 ເຖິງວັນທີ 28/02/2024 ພ້ອມທັງເພີ່ມກຳລັງທະຫານມາໂຕເຂົ້າປະຈຳການໃນເຂດດັ່ງກ່າວ. ສ່ວນ ລັດເຊຍ ລາຍງານວ່າໃນເດືອນ 11/2023 ອູແກຣນ ສູນເສຍກຳລັງທະຫານຫຼາຍກວ່າ 13.700 ຄົນ ແລະ ຍົນສູ້ຮົບ 24 ລຳ ຈາກການຕອບໂຕ້ຄືນລັດເຊຍ ແລະ ນັບຕັ້ງແຕ່ເກີດຂໍ້ຂັດແຍ່ງອູແກຣນ ສູນເສຍກຳລັງຫຼາຍກວ່າ 90.000 ຄົນ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

1. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມ ອົດສະຕຣາລີ.



ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມມິດຕະພາບ ແລະ ເຮັດວຽກ ຢູ່ ອົດສະຕຣາລີ ໃນລະຫວ່າງວັນທີ 28 ຕຸລາ - 01 ພະຈິກ 2023 ເພື່ອເສີມຂະຫຍາຍສາຍພົວພັນດ້ານການທູດປະຊາຊົນລະຫວ່າງ ລາວ-ອົດສະຕຣາລີ.

ໃນໂອກາດຢ້ຽມຢາມດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ພົບປະສອງຝ່າຍກັບການນຳຂັ້ນສູງຂອງອົດສະຕຣາລີ ເປັນຕົ້ນແມ່ນ ໄດ້ພົບປະເຮັດວຽກສອງຝ່າຍກັບ ທ່ານ ນາງ ເພັນນີ ວ່ອງ, ສະມາຊິກວຸດທິສະພາ ທັງເປັນລັດຖະມົນຕີກະຊວງການຕ່າງປະເທດ ອົດສະຕຣາລີ; ໄດ້ພົບປະກັບ ທ່ານ ແພດ ຄອນຣອຍ, ສະມາຊິກສະພາແຫ່ງຊາດ ທັງເປັນລັດຖະມົນຕີກະຊວງອຸດສະຫະກຳປ້ອງກັນປະເທດ, ລັດຖະມົນຕີກະຊວງພັດທະນາສາກົນ ແລະ ວຽກງານຂົງເຂດປາຊີຟິກ ອົດສະຕຣາລີ. ໃນການພົບປະ, ທັງສອງຝ່າຍໄດ້ຕີລາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອຍາວນານລະຫວ່າງ ລາວ ແລະ ອົດສະຕຣາລີ ຕະຫຼອດໄລຍະເວລາຫຼາຍກວ່າ 70 ປີ ແຫ່ງສາຍພົນພັນທາງການທູດນຳກັນ ເຊິ່ງໄດ້ປະກອບສ່ວນຢ່າງສຳຄັນເຂົ້າໃນການສ້າງສາພັດທະນາ ສປປ ລາວ ໂດຍຜ່ານບັນດາໂຄງການຮ່ວມມື ແລະ ຊ່ວຍເຫຼືອຕ່າງໆ ເປັນຕົ້ນແມ່ນ ການພັດທະນາຊັບພະຍາກອນມະນຸດ, ການກໍ່ສ້າງພື້ນຖານໂຄງລ່າງ, ການຫຼຸດຜ່ອນຄວາມທຸກຍາກ ແລະ ອື່ນໆ; ທັງສອງຝ່າຍໄດ້ແລກປ່ຽນສະພາບການພັດທະນາເສດຖະກິດ-ສັງຄົມໃຫ້ກັນຊາບ; ເຫັນດີເປັນເອກະພາບກັນໃນການສືບຕໍ່ເສີມຂະຫຍາຍສາຍພົວພັນທາງດ້ານເສກຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ, ຍິນດີສືບຕໍ່ສະໜັບສະໜູນຍຸດທະສາດການທັນ ສປປ ລາວ ເປັນປະເທດເຊື່ອມຍົງເຊື່ອມຈອດກັບພາກພື້ນ ແລະ ສາກົນ ພ້ອມທັງຊອກຫາທ່າແຮງບົ່ມຊ້ອນຕ່າງໆໃນການຮ່ວມມືສອງຝ່າຍ ລາວ-ອົດສະຕຣາລີ ໃຫ້ຫຼາຍຂຶ້ນໄປເລື້ອຍໆ. ໃນການພົບປະຄັ້ງນີ້, ຝ່າຍລາວໄດ້ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນ ແລະ ການຊ່ວຍເຫຼືອຕ່າງໆໃນຂອບສອງຝ່າຍ ແລະ ຫຼາຍຝ່າຍຂອງອົດສະຕຣາລີຕໍ່ ສປປ ລາວ. ພ້ອມນັ້ນ, ໃນໂອກາດທີ່ ສປປ ລາວ ຈະເປັນປະທານໝູນວຽນອາຊຽນ ໃນປີ 2024 ຝ່າຍອົດສະຕຣາລີ ຍັງໄດ້ໃຫ້ຄຳໝາຍໝັ້ນຈະສະໜັບສະໜູນ ສປປ ລາວ ໃນການເປັນປະທານອາຊຽນໃຫ້ຮັບຜົນສຳເລັດຢ່າງຈົບງາມ.

ໃນໂອກາດການຢ້ຽມຢາມອົດສະຕຣາລີ ຄັ້ງນີ້, ທ່ານ ທອງສະຫວັນ ພົມວິຫານ ໄດ້ຮ່ວມກັບ ທ່ານ ນາງ ເພັນນີ ວ່ອງ ລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການສ້າງຕັ້ງສະມາຄົມມິດຕະພາບ ລາວ-ອົດສະຕຣາລີ ແລະ ອົດສະຕຣາລີ-ລາວ ເພື່ອສົ່ງເສີມສາຍພົວພັນການທູດລະຫວ່າງປະຊາຊົນກັບປະຊາຊົນ, ເພີ່ມທະວີຄວາມເຂົ້າໃຈ, ຄວາມໄວ້ເນື້ອເຊື່ອໃຈໃນການຮ່ວມມືສອງຝ່າຍ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຮ່ວມມືດ້ານລັດໃນຕໍ່ໜ້າ

ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ກໍຄື ເພື່ອສົ່ງເສີມສັນຕິພາບ, ມິດຕະພາບ, ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ

ໃນໄລຍະເຄື່ອນໄຫວຢ້ຽມຢາມດັ່ງກ່າວ ຄະນະຜູ້ແທນລາວ ຍັງມີໂອກາດໄດ້ພົບປະໂອ້ລົມກັບພີ່ນ້ອງຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ປະເທດອິດສະຕຣາລີ ດ້ວຍບັນຍາກາດອັນສະໜິດສະໜົມຮັກແພງ ໂດຍຖືສະເໜີວ່າ ພີ່ນ້ອງຄົນເຊື້ອຊາດລາວແມ່ນວົງຄະນາຍາດຂອງຊາດທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້, ພ້ອມທັງຮຽກຮ້ອງໃຫ້ພີ່ນ້ອງເຊື້ອຊາດລາວເພີ່ມທະວີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ປົກປັກຮັກສາຄຸນຄ່າຂອງວັດທະນະທຳລາວ ເພື່ອພ້ອມກັນປະກອບສ່ວນເຂົ້າໃນການພົວພັນລະຫວ່າງຕ່າງປະເທດກັບ ສປປ ລາວ ໃຫ້ຈະເລີນຮຸ່ງເຮືອງ. ນອກນັ້ນ, ຄະນະຍັງໄດ້ ພົບປະໂອ້ລົມ-ຊີ້ນຳກັບບັນດານັກສຶກສາ ແລະ ນັກຝຶກອົບຮົມລາວທີ່ກຳລັງຮຽນຢູ່ອົດສະຕຣາລີ ພ້ອມທັງໄດ້ ທັດສະນະສຶກສາ ແລະ ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ວັດທະນະທຳ, ທຳມະຊາດ ຢູ່ ຊິດນີ, ແຄນເບີລາ ແລະ ເມວເບີນ ຈຳນວນໜຶ່ງ.

**2. ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມຄະນະກຳມະການຈັດຕັ້ງກອງປະຊຸມສາກົນ ຄັ້ງທີ III.**




ໃນວັນທີ 21 ພະຈິກ 2023, ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໃນນາມຜູ້ຕາງໜ້າຂັ້ນສູງຂອງພັກ ປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມຄະນະກຳມະການຈັດຕັ້ງກອງປະຊຸມສາກົນ ຄັ້ງທີ III ຜ່ານວີດີໂອທາງໄກ ໂດຍການເປັນເຈົ້າພາບຂອງພັກຣັດເຊຍເອກະພາບ. ເຂົ້າຮ່ວມກອງປະຊຸມດັ່ງກ່າວ ມີຄະນະຜູ້ແທນຈາກ 16 ພັກການ ເມືອງທີ່ມາຈາກ ອາຊີ, ອາຟຣິກາ, ອາເມຣິກາລາຕິນ, ເອີຣົບ ແລະ 1 ອົງການຈັດຕັ້ງສາກົນຂອງພັກການເມືອງໃນອາຊີ (ໄອແຄັບ ICAPP). ກອງປະຊຸມຄັ້ງນີ້ ເປັນກອງປະຊຸມສືບຕໍ່ຈາກກອງປະຊຸມຄັ້ງທີ II ຜ່ານມາ ທີ່ຈັດໂດຍ ພັກຣັດເຊຍເອກະພາບ ເພື່ອປຶກສາຫາລືການກະກຽມໃຫ້ແກ່ການຈັດກອງປະຊຸມເວທີປຶກສາຫາລື ຂອງບັນດາຝ່າຍສະໜັບສະໜູນການຕໍ່ສູ້ຕ້ານການປະຕິບັດຂອງລັດທິລ່າເມືອງຂຶ້ນແບບໃໝ່ ໃນສະໄໝໃໝ່, ຊຶ່ງຈະຈັດຂຶ້ນໃນຕໍ່ໜ້າ.

ໃນກອງປະຊຸມດັ່ງກ່າວ, ຫົວໜ້າຄະນະຜູ້ແທນ ພັກ ປປ ລາວ ໄດ້ປະກອບຄຳເຫັນ ໂດຍໄດ້ສະແດງຄວາມຊົມເຊີຍ ແລະ ສະໜັບສະໜູນຕໍ່ແນວຄິດລິເລີ່ມຂອງ ພັກຣັດເຊຍເອກະພາບ ໃນການຈັດກອງປະຊຸມເວທີປຶກສາຫາລືດັ່ງກ່າວ ຊຶ່ງເປັນຂີດໝາຍສຳຄັນແຫ່ງການຮ່ວມມື ແລະ ເຕົ້າໂຮມກຳລັງແຮງ ຂອງບັນດາພັກການເມືອງຈາກທະວີບຕ່າງໆໃນໂລກແນ່ໃສ່ພ້ອມກັນຕ້ານການປະຕິບັດຂອງລັດທິລ່າເມືອງຂຶ້ນແບບໃໝ່ ໃນສະໄໝໃໝ່ ທີ່ເປັນສິ່ງທ້າທາຍຕໍ່ການພັດທະນາຂອງບັນດາປະຊາຊາດໃນພາກພື້ນ ແລະ ໃນໂລກ; ຕີລາຄາສູງ ແລະ ຊົມເຊີຍການກະກຽມດ້ານຕ່າງໆຂອງພັກຣັດເຊຍເອກະພາບ ແລະ ເຫັນດີສະໜັບສະໜູນຮ່າງເນື້ອໃນເອກະສານຕ່າງໆສຳລັບກອງປະຊຸມເວທີປຶກສາຫາລືທີ່ຈະຈັດຂຶ້ນໃນຕໍ່ໜ້າ; ຢືນຢັນສືບຕໍ່ຢຶດໝັ້ນໃນແນວທາງນະໂຍບາຍຕ່າງປະເທດຂອງພັກ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື; ສະແດງຄວາມໝາຍໝັ້ນໃນການສືບຕໍ່ຮ່ວມມື ແລະ ເຮັດວຽກຢ່າງໃກ້ຊິດກັບ ພັກຣັດເຊຍເອກະພາບ ແລະ

ບັນດາພັກເພື່ອນມິດ ແລະ ກຳລັງທີ່ກ້າວໜ້າຂອງບັນດາປະເທດໃນໂລກເພື່ອຕໍ່ສູ້ຕ້ານການປະຕິບັດຂອງລັດທິລ່າເມືອງຂຶ້ນແບບໃໝ່ ໃນສະໄໝໃໝ່.

3. **ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າອວຍພອນ ວັນຊາດ ລາວ ຄົບຮອບ 48 ປີ ຂອງ ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ.**



ວັນທີ 28 ພະຈິກ 2023, ຢູ່ທີ່ສຳນັກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກ (ຫຼັກ 6) ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ສະຫາຍ ຫງວຽນບ໋າຮຸ່ງ, ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານສະຖານທູດ ທີ່ໄດ້ມາອວຍພອນ ຄະນະພັກ, ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ເນື່ອງໃນໂອກາດ ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 48 ປີ.

ໃນໂອກາດການພົບປະ, ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມປິຕິຊົມຊື່ນ ທີ່ໄດ້ຕ້ອນຮັບສະຫາຍ ຫງວຽນ ບ໋າຮຸ່ງ ພ້ອມດ້ວຍຄະນະ ເຊິ່ງໄດ້ນຳເອົາໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສະໜິດສະໜົມ, ຄຳອວຍພອນໄຊອັນປະເສີດ ຖານສະຫາຍອ້າຍນ້ອງ ລາວ-ຫວຽດນາມ ມາສູ່ຄະນະພັກ, ຄະນະນຳ ກໍຄື ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກທັງໝົດ, ເປັນການສະແດງໃຫ້ເຫັນເຖິງຄວາມມີຊີວິດຊີວາ ຂອງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ທີ່ປະທານ ໂຮ່ຈີມິນ, ປະທານ ໄກສອນ ພົມວິຫານ ປະທານ ສຸພານຸວົງ ເປັນຜູ້ກໍ່ຕັ້ງ ແລະ ໄດ້ຮັບການເພີ່ມພູນຄູນສ້າງ ຈາກບັນດາຮຸ່ນການນຳ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ແລະ ສືບຕໍ່ໄດ້ຮັບການເສີມຂະຫຍາຍເຂົ້າສູ່ລວງເລິກ, ແທດຕົວຈິງ ແລະ ມີປະສິດທິຜົນ. ພ້ອມນີ້ ສະຫາຍ ວະລະໄຊ ເລັ່ງສະຫວັດ ໄດ້ຕີລາຄາສູງຕໍ່ການເຮັດວຽກຢ່າງຫ້າວຫັນ ຂອງສະຫາຍທູດ ແລະ ພະນັກງານ ສະຖານທູດ ໃນການປະສານສົມທົບ ແລະ ເປັນຂົວຕໍ່ໃນການພົວພັນຮ່ວມມື ໃນຂົງເຂດຕ່າງໆ, ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ພ້ອມທັງໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງ ຕໍ່ການປະສານສົມທົບກັນຢ່າງໃກ້ຊິດ ກໍຄື ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖານທູດ ສສ ຫວຽດນາມ ຕະຫຼອດໄລຍະຜ່ານ.

ສະຫາຍ ຫງວຽນບ໋າຮຸ່ງ ໄດ້ສະແດງຄວາມຂອບໃຈ, ດີໃຈທີ່ໄດ້ມາ ອວຍພອນ ຄະນະພັກ, ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ໃນໂອກາດ ວັນຊາດ ຄົບຮອບ 48 ປີ ແລະ ໄດ້ສະແດງຄວາມປິຕິຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດ ທີ່ພັກ, ລັດ ແລະ ປະຊາຊົນລາວ ບັນດາເຜົ່າ ຍາດມາໄດ້ຕະຫຼອດ 48 ປີ ຜ່ານມາ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ຂອງພັກປະຊາຊົນປະຕິວັດລາວ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເຮັດໃຫ້ ສປປ

ລາວ ມີສະຖຽນລະພາບທາງການເມືອງທີ່ໜັກແໜ້ນ, ສັງຄົມ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເຊື່ອໝັ້ນວ່າ ພາຍໃຕ້ການຊີ້ນຳນຳພາອັນຖືກຕ້ອງຂອງພັກ ປປ ລາວ, ສປປ ລາວ ຈະສາມາດຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກຕ່າງໆ ໄດ້ຢ່າງແນ່ນອນ.

**4. ສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ນຳເອົາກະຖິນພະຣາຊະທານຂອງເຈົ້າຊີວິດແຫ່ງຣາຊະອານາຈັກໄທ ໄປທອດຖວາຍ ຢູ່ ແຂວງຫຼວງນ້ຳທາ.**



ວັນທີ 12 ພະຈິກ 2023, ສະມາຄົມ ລາວ-ໄທ ເພື່ອມິດຕະພາບ ແລະ ສະມາຄົມ ໄທ-ລາວ ເພື່ອມິດຕະພາບ ໄດ້ນຳກອງກະຖິນພະຣາຊະທານ ຂອງເຈົ້າຊີວິດແຫ່ງຣາຊະອານາຈັກໄທ ໄປທອດຖວາຍ ຢູ່ວັດສາມັກຄີໄຊ, ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ. ໃຫ້ກຽດຮັບກອງກະຖິນໂດຍ ພຣະອາຈານ ບຸນທຳ ບຸນວົງ, ປະທານອົງການພຸດທະສາສະໜາສຳພັນລາວ, ແຂວງຫຼວງນ້ຳທາ, ເຈົ້າອະທິການວັດສາມັກຄີໄຊ ແລະ ໃຫ້ກຽດເຂົ້າຮ່ວມຂອງ ທ່ານ ວຽງສະຫວັດ ສີພັນດອນ ເຈົ້າແຂວງຫຼວງນ້ຳທາ, ພ້ອມນັ້ນ ທ່ານ ວັນສີ ກົວມົວ, ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ທ່ານ ຫຼີ ບຸນຄ້ຳ, ປະທານສະມາຄົມ ລາວ-ໄທ ເພື່ອມິດຕະພາບ, ທ່ານ ຄຳພັນ ອັ່ນລາວັນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ລາວ ປະຈຳ ຣາຊະອານາຈັກໄທ, ທ່ານ ບົວສອນ ບຸບຜາວັນ, ອະດີດນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ມີບັນດາການນຳບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຈາກສູນກາງ ແລະ ອ້ອມຂ້າງແຂວງຫຼວງນ້ຳທາ ເຂົ້າຮ່ວມ. ສ່ວນຝ່າຍໄທນຳໂດຍ ທ່ານ ກຽດຕິຄຸນ ຊາດປະເສີດ, ປະທານສະມາຄົມ ໄທ-ລາວ ເພື່ອມິດຕະພາບ, ທ່ານ ນາງ ມໍລະກົດ ສີສະຫວັດ, ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມແຫ່ງຣາຊະອານາຈັກໄທປະຈຳ ສປປ ລາວ, ຊົມລົມໄທພວນ ແລະ ຊົມລົມລາວວຽງ ແຫ່ງຣາຊະອານາຈັກໄທ. ນອກນັ້ນ, ຍັງມີພໍ່ແມ່ປະຊາຊົນຜູ້ມີຈິດໃຈເຫຼື້ອມໃສໃນພຸດທະສາສະໜາທັງລາວ ແລະ ໄທ ເຂົ້າຮ່ວມເປັນເຈົ້າສັດທາເປັນຈຳນວນຫຼວງຫຼາຍ.

ການທອດຖວາຍກະຖິນ ແມ່ນກິດຈະກຳປະຈຳປີ ຂອງສອງສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບໄດ້ປະຕິບັດຮ່ວມກັນເປັນປົກກະຕິ ເພື່ອສົ່ງເສີມ ແລະ ອະນຸລັກວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງ ປະຊາຊົນລາວ ແລະ ໄທ. ສອງສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ໄດ້ຈັດກິດຈະກຳທອດກະຖິນພະຣາຊະທານຜ່ານມາ ຈຳນວນ 24 ຄັ້ງ (ຣາຊະການທີ IX ຈຳນວນ 20 ຄັ້ງ ແລະ X ຈຳນວນ 04 ຄັ້ງ). ພາຍໃນພິທີທອດຖວາຍກະຖິນຍັງມີກິດຈະກຳປິ່ນອ້ອມເຊັ່ນ: ງານຕະຫຼາດນັດ, ສອນເຕັກນິກການເຕະບານ, ສະແດງສິລະປະຂອງລາວ ແລະ ໄທ, ມອບຜ້າຫົ່ມ 500 ຜືນ, ໝອນ 550 ໜ່ວຍ, ເສື້ອກັນໜາວ 250 ຜືນ, ໝາກບານ 48 ໜ່ວຍ ແລະ ອື່ນໆ. ກິດຈະກຳການຖວາຍກະຖິນຄັ້ງນີ້ ນອກຈາກເປັນການສົ່ງເສີມວັດທະນະທຳ, ຮີດຄອງປະເພນີ ຍັງເປັນການຊຸກຍູ້ການໄປມາຫາສູ່ເຊິ່ງກັນແລະກັນ ຂອງປະຊາຊົນລາວ ແລະ ໄທ, ທັງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມ ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດ. ພ້ອມທັງເປັນການຈັດຕັ້ງຜັນຂະຫຍາຍການຮ່ວມມືໃນຖານະເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ພັດທະນາແບບຍືນຍົງ ລາວ-ໄທ ໃຫ້ຈະເລີນກ້າວໜ້າຍິ່ງໆຂຶ້ນ.